rfa | ວິທຍຸເອເຊັຽເສຣີ

# ບໍຣິສັດຂຸດທອງຂໍໃຫ້ 10 ຄອບຄົວ ຍ້າຍອອກ

ໄຊຍາ
2020.01.14



*ການຂຸດຄົ້ນ ບໍ່ຄໍາ-ທອງ ຢູ່ເຊໂປນ ເມືອງວິລະບູລີ ແຂວງສວັນນະເຂດ*

ບໍຣິສັດຂຸດຄົ້ນແຮ່ຄໍາ ຊີເຟີງຂອງຈີນ ຢູ່ເຂດບ້ານໂນນສົມບູນ ເມືອງເຊໂປນ ແຂວງສວັນນະເຂດ ຕ້ອງການໃຫ້ປະຊາຊົນ 10 ປາຍຄອບຄົວ ໂຍກຍ້າຍອອກຈາກບ້ານໂນນສົມບູນ ພາຍໃນປີ 2020. ດັ່ງ ອໍານາດການປົກຄອງທ້ອງຖິ່ນ ໄດ້ກ່າວຕໍ່ ນັກຂ່າວ ເອເຊັຽເສຣີ ໃນວັນທີ 14 ມົກກະຣາ ວ່າ; ບ່ອນທີ່ໃຫ້ໄປຢູ່ມັນໄກ ໂຕເມືອງ ແລະ ນາຍບ້ານບໍ່ໃຫ້ຍ້າຍຍ້ອນ ວ່າ ຍ້າຍພຽງ 10 ຄອບຄົວ.

*"ບໍຣິສັດ ຊີເຟີງ ມັນເປັນບໍຣິສັດຈີນ ເຂົາໃຫ້ໂຍກຍ້າຍປະມານ 10 ຫຼັງຄາເຮືອນ ຍ້າຍອອກຈາກບ່ອນນີ້ນ່າ ມັນໃຫ້ຍ້າຍໄປຢູ່ບ່ອນອື່ນເຂົາ ໃຫ້ຍ້າຍປີ 2020 ນີ້ແຫຼະໄປຢູ່ພຸ້ນທາງເລກ 9 ພຸ້ນແຫຼະ ຢູ່ໄກໂຕເມືອງ ພໍ່ບ້ານເພິ່ນບໍ່ໃຫ້ ໂຍກຍ້າຍ, ໂຍກຍ້າຍດ້າມນ້ອຍ ຄັນໂຍກຍ້າຍ ເບີດບ້ານໄຄແດ່ ແຕ່ຍ້າຍມາຍ້າຍນ້ຳນ້ອຍ ໄປຢູ່ນ້ຳໃຫຍ່."*

ທ່ານໄດ້ກ່າວຕື່ມວ່າ ເຮືອນຈຳນວນ 10 ປາຍຫຼັງນີ້ ຢູ່ຮ່າງຈາກບໍ່ຄຳ ພຽງແຕ່ 200-300 ແມັດ ເທົ່ານັ້ນ. ກ່ອນໜ້ານັ້ນທາງບໍຣິສັດໄດ້ລົງມາ ເຈຣະຈາກັບນາຍບ້ານແລ້ວ ແຕ່ປະຊາຊົນບໍ່ຍອມ ຍ້ອນວ່າໄດ້ອາສັຍຢູ່ນີ້ ທຳມາຫາກິນມາເປັນເວລາຫຼາຍປີແລ້ວ ພ້ອມນີ້ຈຸດທີ່ໃຫ້ຍ້າຍໄປນັ້ນ ມັນຢູ່ໄກຈາກໂຕເມືອງ. ຕໍ່ບັນຫາດັ່ງກ່າວ ເຈົ້າໜ້າທີ່ ຫ້ອງການປົກຄອງເມືອງໄດ້ຊີ້ແຈງວ່າບັນຫານີ້ ມີແທ້ແຕ່ໄດ້ແກ້ໄປແລ້ວ ຕອນນີ້ກຳລັງ ຊອກດິນໃກ້ໆ ທີ່ມີຊຸມຊົນໃຫ້ປະຊາຊົນຍ້າຍໄປຢູ່.

*"ຖືວ່າເປັນເອກກະພາບກັນແລ້ວ ແຕ່ວ່າຢູ່ໃນ 10 ປາຍຄອບຄົວ ເປັນຂໍ້ຂັດແຍ່ງແຕ່ກ່ອນຊື່ໆ. ເຂົາເອກກະພາບແລ້ວ ພວກເຮົາໄດ້ອົບຮົມໄດ້ ປະຊຸມ ຖືວ່າເອກກະພາບມີແຕ່ວ່າເພິ່ນຖ້າ ທາງເມືອງເຮົ າລົງໄປຈັດສັນໃຫ້ເຂົາເຈົ້າ ແລະແບ່ງເປັນອັນນັ້ນ ໃຫ້ຂະເຈົ້າ ຄອບຄົວລະເຮັດຕ້າ ໂຕຢ່າງນ່າເນາະບໍ່ໄດ້ໂຍກຍ້າຍໄປໄກດອກ."*

ບໍຣິສັດ ຊີເຟີງ ຂອງຈີນ ເປັນບໍຣິສັດທີ່ ຮັບສັມປະທານ ຕໍ່ຈາກບໍຣສັດ ລ້ານຊ້າງ ມິເນໂຣ ເພື່ອຂຸດແຮ່ທອງ ເມື່ອປີ 2019 ປັດຈຸບັນຍັງດຳ ເນີນການຂຸດແຮ່ທອງຢູ່ ອີງຕາມແຫຼ່ງຂ່າວໃນລາວ ຣາຍງານເມື່ອປີກາຍວ່າ ບໍ່ຄຳເຊໂປນ ປັດຈຸບັນແຮ່ຄຳໝົດແລ້ວ ຍັງເຫຼືອແຕ່ແຮ່ທອງ ທີ່ ບໍຣິສັດ ຊີເຟີງຂອງຈີນ ກຳລັງຂຸດຄົ້ນໃນປັດຈຸບັນ.